ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

8643 •/

ກະຊວງສຶກສາທິການ ແລະ ກິລາ

ເລກທີ: /ສສກ

ນະຄອນຫຼວງວຽງຈັນ, ວັນທີ 25 DEC 2017

# ຂໍ້ຕົກລົງ

## ວ່າດ້ວຍການອະນຸມັດການສ້າງຕັ້ງສະຖາບັນການສຶກສາຊັ້ນສູງ

- ອີງຕາມ ກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ) ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 67/ນຍ, ລົງວັນທີ 03 ກຸມພາ 2017;
- ອີງຕາມ ດຳລັດວ່າດ້ວຍການສຶກສາຊັ້ນສູງ ສະບັບເລກທີ 177/ລບ, ລົງວັນທີ 05 ມິຖຸນາ 2015;
- ອີງຕາມ ການສະເໜີຂອງກົມການສຶກສາຊັ້ນສູງ ແລະ ການຄົ້ນຄວ້າຂອງກົມຈັດຕັ້ງ ແລະ ພະນັກງານ.

ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດລະບຽບຫຼັກການ, ເງື່ອນໄຂ, ມາດຕະຖານໃນການສ້າງຕັ້ງ, ການຍົກຖານະ, ການຂະຫຍາຍ, ການໂຮມ, ການແຍກ ແລະ ການຍຸບເລີກ ສະຖາບັນການສຶກສາຊັ້ນສູງ ເພື່ອຮັບປະກັນໃຫ້ການສຶກສາມີຄຸນນະພາບສາມາດຕອບສະໜອງຕາມຄວາມຕ້ອງການໃນການສ້າງຊັບພະຍາກອນມະນຸດໃຫ້ສອດຄ່ອງກັບການພັດທະນາ ເສດຖະກິດ-ສັງຄົມໃນແຕ່ລະໄລຍະ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

### ມາດຕາ 2 ມາດຕະຖານສະຖາບັນການສຶກສາຊັ້ນສູງ

ມາດຕະຖານສະຖາບັນການສຶກສາຊັ້ນສູງ ແມ່ນການກຳນົດເງື່ອນໄຂ ແລະ ມາດຕະຖານ ໃນການສ້າງຕັ້ງ, ການຍົກຖານະ, ການຂະຫຍາຍ, ການໂຮມ, ການແຍກ ແລະ ການຍຸບເລີກ ໃຫ້ໄປຕາມຮູບແບບ, ປະເພດ ແລະ ລະດັບ ຂອງສະຖາບັນການສຶກສາຊັ້ນສູງ ໃຫ້ມີຄວາມເປັນເອກະພາບແລະ ສອດຄ່ອງຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

### ມາດຕາ 3 ການອະທິບາຍຄຳສັບ

1. **ມາດຕະຖານຫຼັກສູດແຫ່ງຊາດ:** ໝາຍເຖິງ ບັນທັດຖານທີ່ກຳນົດຄຸນນະພາບຂອງຫຼັກສູດເພື່ອບັນລຸຕາມຈຸດປະສົງ ແລະ ເປົ້າໝາຍ ຂອງການຈັດຕັ້ງການຮຽນ-ການສອນ ໃນສະຖາບັນການສຶກສາຊັ້ນສູງ;
2. **ການຂຶ້ນທະບຽນ:** ໝາຍເຖິງ ການບັນທຶກຊື່, ຂໍ້ມູນຂອງສະຖາບັນການສຶກສາຊັ້ນສູງ ແລະ ຫຼັກສູດການສຶກສາຊັ້ນສູງທີ່ໄດ້ຮັບອະນຸມັດ ໄວ້ໃນບັນຊີລາຍຊື່ຢ່າງເປັນທາງການ ຂອງກະຊວງສຶກສາທິການ ແລະ ກິລາ;

**ມາດຕາ 4 ຫຼັກການລວມ**

1. ຮັບປະກັນການສ້າງຕັ້ງ, ການຍົກຖານະ, ການຂະຫຍາຍ, ການໂຮມ, ການແຍກ ແລະການຍຸບເລີກ ຂອງສະຖານການສຶກສາຊັ້ນສູງ ໃຫ້ໄປຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
2. ຮັບປະກັນການພັດທະນາການສຶກສາຊັ້ນສູງໃຫ້ມີຄຸນນະພາບ, ມີຄວາມໂປ່ງໃສ ແລະ ສອດຄ່ອງກັບແຜນພັດທະນາຊັບພະຍາກອນມະນຸດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ;
3. ຮັບປະກັນການຈັດຕັ້ງການຮຽນ-ການສອນໃນແຕ່ລະລະດັບໃຫ້ໄປຕາມມາດຕະຖານຫຼັກສູດແຫ່ງຊາດ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຂອງລັດ, ເອກະຊົນ ແລະ ການຈັດຕັ້ງສັງຄົມ ທີ່ມີຈຸດປະສົງໃນການສ້າງຕັ້ງສະຖາບັນການສຶກສາຊັ້ນສູງ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ການສ້າງຕັ້ງ ແລະ ການປ່ຽນແປງສະຖານະພາບຂອງສະຖາບັນການສຶກສາຊັ້ນສູງ

**ມາດຕາ 6 ສະຖາບັນການສຶກສາຊັ້ນສູງ**

ສະຖາບັນການສຶກສາຊັ້ນສູງ ປະກອບດ້ວຍ ວິທະຍາໄລ, ສະຖາບັນ, ວິທະຍາຄານ, ມະຫາວິທະຍາໄລ ແລະ ສະຖາບັນທຽບເທົ່າມະຫາວິທະຍາໄລ ຕ້ອງປະຕິບັດ 3 ໜ້າທີ່ຫລັກຄື: ການຮຽນ-ການສິດສອນ, ການວິໄຈ-ຄົ້ນຄວ້າ ແລະ ການບໍລິການວິຊາການ ຕາມທີ່ໄດ້ກຳນົດໄວ້ໃນດຳລັດວ່າດ້ວຍການສຶກສາຊັ້ນສູງ.

**ມາດຕາ 7 ເງື່ອນໄຂລວມໃນການສ້າງຕັ້ງສະຖາບັນການສຶກສາຊັ້ນສູງ**

ເງື່ອນໄຂລວມໃນການສ້າງຕັ້ງສະຖາບັນການສຶກສາຊັ້ນສູງ ປະກອບມີດັ່ງນີ້:

1. **ໂຄງປະກອບກົງຈັກການຈັດຕັ້ງ:** ຊື່, ທີ່ຕັ້ງ, ພາລະບົດບາດ, ຮູບແບບ ແລະ ກາໝາຍ;
2. **ໂຄງປະກອບບຸກຄະລາກອນ:** ມີບຸກຄະລາກອນ ແລະ ຄູສອນທີ່ພຽງພໍທາງດ້ານປະລິມານ ແລະ ຄຸນນະພາບ ຕາມມາດຕະຖານ ທີ່ກະຊວງສຶກສາທິການ ແລະ ກິລາ ກຳນົດໄວ້;
3. **ຫຼັກສູດ:** ມີຫຼັກສູດ ຢ່າງໜ້ອຍ 03 ຫຼັກສູດ ຂຶ້ນໄປໂດຍໄດ້ຮັບການອະນຸມັດ ແລະ ຮັບຮອງ ການນຳໃຊ້ ຈາກກະຊວງສຶກສາທິການ ແລະ ກິລາ;
4. **ພື້ນຖານໂຄງລ່າງ:** ມີອາຄານສະຖານທີ່, ຫ້ອງຮຽນ, ຫ້ອງທົດລອງ, ຫ້ອງສະໝຸດຕາມມາດຕະຖານຂອງກະຊວງສຶກສາທິການ ແລະ ກິລາ ກຳນົດໄວ້ ແລະ ອື່ນໆ;
5. **ສິ່ງອຳນວຍຄວາມສະດວກ:** ມີພາຫະນະ, ອຸປະກອນຮັບໃຊ້ໃນການຮຽນ-ການສອນ ແລະ ອື່ນໆ;
6. **ການເງິນ:** ມີງົບປະມານ, ການເງິນ ແລະ ການລົງທຶນ ໃນການບໍລິຫານ ແລະ ການຄຸ້ມຄອງ.

ສຳລັບເງື່ອນໄຂສະເພາະໃນການສ້າງຕັ້ງສະຖາບັນການສຶກສາຊັ້ນສູງໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ.

**ມາດຕາ 8 ການປ່ຽນແປງສະຖານະພາບ**

ການປ່ຽນແປງສະຖານະພາບ ຂອງສະຖາບັນການສຶກສາຊັ້ນສູງແມ່ນການຍົກຖານະ, ການຂະຫຍາຍວິທະຍາເຂດ, ການສ້າງຕັ້ງຄະນະ, ພາກວິຊາ, ການຂະຫຍາຍ, ການໂຮມ, ການແຍກ ແລະ ຍຸບເລີກ ຕ້ອງປະຕິບັດຕາມເງື່ອນໄຂແລະ ປະກອບເອກະສານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ແລະ ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 9 ການປິດຊົ່ວຄາວ ແລະການຍຸບເລີກຖາວອນ**

ສະຖາບັນການສຶກສາຊັ້ນສູງ ທຸກຮູບແບບ ຈະຖືກປິດຊົ່ວຄາວ ຫຼື ຍຸບເລີກຖາວອນຕາມແຕ່ລະກໍລະນີດັ່ງນີ້:

1. ລະເມີດຕໍ່ແນວທາງນະໂຍບາຍຂອງພັກ-ລັດ, ລະເມີດກົດໝາຍ ແລະ ລະບຽບການ;
2. ເຄື່ອນໄຫວບໍ່ຖືກຕາມພາລະບົດບາດ ແລະ ຈຸດປະສົງເປົ້າໝາຍ ຂອງສະຖານການສຶກສາຊັ້ນສູງ;
3. ບໍ່ປະຕິບັດ ຫຼື ບໍ່ພັດທະນາຄຸນນະພາບ ຕາມການແນະນຳ ຂອງກະຊວງສຶກສາທິການ ແລະ ກິລາ ວາງອອກ;
4. ມີຄຳຮ້ອງຂໍປິດຊົ່ວຄາວ ຫຼື ຍຸບເລີກຖາວອນ ຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງດ້ວຍເຫດຜົນຕ່າງໆ;
5. ມີການຮ້ອງຟ້ອງ ໂດຍບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຫຼື ທາງສຽງຈາກສັງຄົມທົ່ວໄປ ດ້ວຍເຫດຜົນຕ່າງໆ.

## ໝວດທີ 3
## ການຂໍອະນຸມັດສ້າງຕັ້ງສະຖາບັນການສຶກສາຊັ້ນສູງ

**ມາດຕາ 10 ການປະກອບເອກະສານ**

ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຂອງລັດ, ເອກະຊົນ, ອົງການຈັດຕັ້ງສັງຄົມ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງ ສ້າງຕັ້ງ, ການຍົກຖານະ, ການຂະຫຍາຍ, ການໂຮມ, ການແຍກ, ການປິດຊົ່ວຄາວ ແລະ ການຍຸບເລີກຖາວອນ ໃນທຸກຮູບແບບ, ປະເພດ ແລະ ລະດັບ ໃຫ້ຍື່ນຄຳຮ້ອງ ແລະ ປະກອບເອກະສານ ໃຫ້ຄົບຖ້ວນກ່ອນມື້ເປີດສົກຮຽນ 06 ເດືອນ ດັ່ງນີ້:

1. ໜັງສືສະເໜີຂໍສ້າງຕັ້ງ;
2. ບົດວິພາກ;
3. ຫຼັກສູດ;
4. ໃບຕາດິນ ຫຼື ຫຼັກຖານອື່ນໆ ທີ່ສະແດງເຖິງກຳມະສິດໃນການນຳໃຊ້ທີ່ດິນ;
5. ໃບອະນຸຍາດດຳເນີນທຸລະກິດ ແລະ ເອກະສານທີ່ກ່ຽວຂ້ອງ;
6. ສຳລັບສະຖາບັນການສຶກສາຊັ້ນສູງ ຂອງລັດຕ້ອງມີໜັງສືຢັ້ງຢືນ ຈາກການຈັດຕັ້ງທີ່ກ່ຽວຂ້ອງ.

**ມາດຕາ 11 ການຂໍອະນຸມັດສ້າງຕັ້ງສະຖາບັນການສຶກສາຊັ້ນສູງ**

ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຂອງລັດ, ເອກະຊົນ ແລະ ການຈັດຕັ້ງສັງຄົມ ທີ່ມີຈຸດປະສົງໃນການສ້າງຕັ້ງສະຖາບັນການສຶກສາຊັ້ນສູງໃຫ້ປະຕິບັດຕາມຂັ້ນຕອນດັ່ງນີ້:

**1. ສະຖາບັນການສຶກສາຊັ້ນສູງຂອງລັດ:**

ອົງການຈັດຕັ້ງຂອງລັດ ທີ່ມີຈຸດປະສົງສ້າງຕັ້ງສະຖາບັນການສຶກສາຊັ້ນສູງ ຕ້ອງປະກອບເອກະສານຄົບຊຸດຕາມທີ່ໄດ້ກຳນົດໄວ້ ແລະ ສະເໜີຜ່ານ ອຳນາດການປົກຄອງທ້ອງຖິ່ນ, ຂະແໜງການທີ່ກ່ຽວຂ້ອງກ່ອນນຳສະເໜີຕໍ່ກະຊວງສຶກສາທິການ ແລະ ກິລາຕາມແຜນພັດທະນາການສຶກສາ ແລະ ກິລາ.

**2. ສະຖາບັນການສຶກສາຊັ້ນສູງຂອງເອກະຊົນ:**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງສັງຄົມ ທີ່ມີຈຸດປະສົງສ້າງຕັ້ງສະຖາບັນການສຶກສາຊັ້ນສູງ ຕ້ອງປະກອບເອກະສານຄົບຊຸດຕາມທີ່ໄດ້ກຳນົດໄວ້ ແລະ ສະເໜີຜ່ານ ອຳນາດການປົກຄອງທ້ອງຖິ່ນ, ຂະແໜງການທີ່ກ່ຽວຂ້ອງກ່ອນນຳສະເໜີຕໍ່ກະຊວງສຶກສາທິການ ແລະ ກິລາ ຕາມລະບຽບການ.

**3. ສະຖາບັນການສຶກສາຊັ້ນສູງ ຂອງຕ່າງປະເທດ:**

ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຂອງລັດ, ເອກະຊົນ ຂອງຕ່າງປະເທດ ທີ່ມີຈຸດປະສົງສ້າງຕັ້ງສະຖາບັນການສຶກສາຊັ້ນສູງ ຕ້ອງປະກອບເອກະສານຄົບຊຸດຕາມທີ່ໄດ້ກຳນົດໄວ້ ແລະ ສະເໜີຜ່ານ ອຳ

ນາດການປົກຄອງທ້ອງຖິ່ນ,ຂະແໜງການທີ່ກ່ຽວຂ້ອງ ກ່ອນນຳສະເໜີກະຊວງສຶກສາທິການ ແລະ ກິລາ ຕາມລະບຽບການ.

ກະຊວງສຶກສາທິການ ແລະ ກິລາ ຈະແຈ້ງຜົນການການພິຈາລະນາການຮັບຮອງ ແລະ ອະນຸມັດສ້າງຕັ້ງ ສະຖາບັນການສຶກສາຊັ້ນສູງ ໃຫ້ແກ່ ຜູ້ສະເໜີຂໍສ້າງຕັ້ງ ຮັບຊາບພາຍໃນ 60 ວັນ.

ສຳລັບຜູ້ສະເໜີຂໍສ້າງຕັ້ງມີຈຸດປະສົງຖອນເອກະສານຄືນ ຕ້ອງຍື່ນຄຳຮ້ອງຂໍຖອນ ຕໍ່ກະຊວງສຶກສາທິການ ແລະ ກິລາ ຢ່າງເປັນທາງການ ພາຍໃນກຳນົດເວລາ 01 ເດືອນ ແລະ ຈະບໍ່ໄດ້ຮັບເງິນຄ່າທຳນຽມຄືນ.

**ມາດຕາ 12 ການອະນຸຍາດ**

ການອະນຸຍາດສ້າງຕັ້ງ, ການຍົກຖານະ, ການຂະຫຍາຍ, ການໂຮມ, ການແຍກ, ການປິດຊົ່ວຄາວ ແລະ ການຍຸບເລີກຖາວອນ ສະຖາບັນການສຶກສາຊັ້ນສູງ ໃຫ້ປະຕິບັດດັ່ງນີ້:

1. ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ສະເໜີນາຍົກລັດຖະມົນຕີ ອະນຸຍາດການສ້າງຕັ້ງ, ການຍົກຖານະ, ການຂະຫຍາຍ, ການໂຮມ, ການແຍກ ແລະ ການຍຸບເລີກຖາວອນ ສະຖາບັນການສຶກສາຊັ້ນສູງ ປະເພດ 1 ທຸກຮູບແບບ (ລະດັບຊາດ ແລະ ລະດັບນານາຊາດ) ຕາມການສະເໜີຂອງກະຊວງສຶກສາທິການ ແລະ ກິລາ ແລະ ການຈັດຕັ້ງຂະແໜງການທີ່ກ່ຽວຂ້ອງ;
2. ສະພາການສຶກສາຊັ້ນສູງແຫ່ງຊາດ ສະເໜີລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ອະນຸຍາດສ້າງຕັ້ງ ການຂະຫຍາຍ, ການໂຮມ, ການແຍກ, ການປິດຊົ່ວຄາວ ແລະ ການຍຸບເລີກຖາວອນ ສະຖາບັນການສຶກສາຊັ້ນສູງທຸກຮູບແບບ ຂອງປະເພດ 2,3 ແລະ 4 (ລະດັບພາກ, ແຂວງ ຫຼື ຊຸມຊົນ ແລະ ສະເພາະຂະແໜງການ) ຕາມການສະເໜີ ຂອງອົງການຈັດຕັ້ງ, ຂະແໜງການທີ່ກ່ຽວຂ້ອງ;
3. ການສັ່ງປິດ ຫຼື ໂຈະການເຄື່ອນໄຫວຊົ່ວຄາວ ສະຖາບັນການສຶກສາຊັ້ນສູງ ທຸກຮູບແບບ, ທຸກປະເພດໂດຍອີງຕາມແຕ່ລະກໍລະນີ ທີ່ໄດ້ກຳນົດໄວ້ໃນ ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 4
## ການຂຶ້ນທະບຽນ ແລະ ການຕໍ່ອາຍຸໃບອະນຸຍາດ

**ມາດຕາ 13 ການຂຶ້ນທະບຽນ**

ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ຂຶ້ນທະບຽນບັນຊີລາຍຊື່ສະຖາບັນການສຶກສາຊັ້ນສູງ ພາຍໃນ 30 ວັນ ຫຼັງຈາກໄດ້ຮັບການອະນຸມັດສ້າງຕັ້ງ.

**ມາດຕາ 14 ການຕໍ່ອາຍຸໃບອະນຸຍາດ**

**ການຕໍ່ອາຍຸໃບອະນຸຍາດປະຕິບັດດັ່ງນີ້:**

1. ສະຖາບັນການສຶກສາຊັ້ນສູງ ຕ້ອງຍື່ນຄຳຮ້ອງຂໍຕໍ່ໃບອະນຸຍາດພາຍໃນ 06 ເດືອນ ກ່ອນຈະໝົດອາຍຸ;
2. ການພິຈາລະນາຕໍ່ອາຍຸໃບອະນຸຍາດ: ສະຖາບັນການສຶກສາຊັ້ນສູງ ຈະໄດ້ຮັບການປະເມີນຄືນຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້;
3. ສະຖາບັນການສຶກສາຊັ້ນສູງ ທີ່ບໍ່ຂໍຕໍ່ອາຍຸໃບອະນຸຍາດຕາມເວລາທີ່ກຳນົດໄວ້ ຈະຖືກຖອນອອກຈາກທະບຽນລາຍຊື່ສະຖາບັນການສຶກສາຊັ້ນສູງ ແລະ ບໍ່ມີສິດໃນການດຳເນີນການຈັດຕັ້ງ ການຮຽນ-ການສອນ ຕໍ່ໄປ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 15 ການເຜີຍແຜ່ຂະຫຍາຍ**

ມອບໃຫ້ກົມການສຶກສາຊັ້ນສູງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງເຜີຍແຜ່ຂໍ້ຕົກລົງສະບັບນີ້ ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຮັບຮູ້ ພ້ອມທັງຄົ້ນຄວ້າອອກລະບຽບການ ກ່ຽວກັບ ການຈັດຕັ້ງປະຕິບັດ.

**ມາດຕາ 16 ການຈັດຕັ້ງປະຕິບັດ**

ໃຫ້ຫ້ອງການກະຊວງ, ກົມ, ສະຖາບັນ, ສູນ, ພະແນກສຶກສາທິການ ແລະ ກິລາແຂວງ,ນະຄອນຫຼວງ, ສະຖາບັນການສຶກສາຊັ້ນສູງ ແລະ ຂະແໜງການທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ ຕາມໜ້າທີ່ຂອງໃຜລາວ.

**ມາດຕາ 17 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ຂໍ້ຕົກລົງ ແລະ ລະບຽບຫຼັກການຕ່າງໆ ທີ່ອອກໃນເມື່ອກ່ອນ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ອນແຕ່ຖືກລົບລ້າງ.

ລັດຖະມົນຕີ

ມ.ແສງເດືອນ ຫຼ້າຈັນທະບູນ

<u>ບ່ອນສົ່ງ:</u>

| | |
|---|---|
| - ກະຊວງພາຍໃນ | 1 ສະບັບ |
| - ຫ້ອງການ, ກົມ, ສະຖາບັນ, ສູນຂຶ້ນກັບກະຊວງສສກ ບ່ອນລະ | 1 ສະບັບ |
| - ສະຖາບັນການສຶກສາຊັ້ນສູງ ບ່ອນລະ | 1 ສະບັບ |
| - ພາກສ່ວນກ່ຽວຂ້ອງ ບ່ອນລະ | 1 ສະບັບ |
| - ເກັບມ້ຽນ | 3 ສະບັບ |

- ເງື່ອນໄຂລວມ ຂອງມາດຕະຖານສະຖາບັນການສຶກສາຊັ້ນສູງ

| ປະເພດ ເງື່ອນໄຂ | ວິທະຍາໄລ | ສະຖາບັນ | ວິທະຍາຄານ | ມະຫາວິທະຍາໄລ ແລະ ສະຖາບັນທຽບເທົ່າມະຫາວິທະຍາໄລ | ເອກະສານທີ່ກ່ຽວຂ້ອງ |
|---|---|---|---|---|---|
| 1. ໂຄງປະກອບກົງຈັກການຈັດຕັ້ງ | 1. ທີ່ຕັ້ງ ແລະ ພາລະບົດບາດ<br>2. ຊື່, ກາໝາຍ, ລະດັບ, ຮູບແບບທີ່ບໍ່ຊ້ຳກັບວິທະຍາໄລອື່ນ<br>3. ໂຄງປະກອບກົງຈັກການຈັດຕັ້ງ<br>- ສະພາວິທະຍາໄລ<br>- ສະພາບໍລິຫານ<br>- ສະພາວິຊາການ<br>- ສຳນັກງານວິທະຍາໄລ (ຫ້ອງການ, ພະແນກ, ໜ່ວຍງານ)<br>- ສາຍວິຊາ<br>- ໜ່ວຍວິຊາ<br>- ໂຮງຮຽນ(ສະເພາະວິທະຍາໄລຄູ) | 1. ທີ່ຕັ້ງ ແລະ ພາລະບົດບາດ<br>2. ຊື່, ກາໝາຍ, ລະດັບ, ຮູບແບບທີ່ບໍ່ຊ້ຳກັບສະຖາບັນອື່ນ<br>3. ໂຄງປະກອບກົງຈັກການຈັດຕັ້ງ<br>- ສະພາສະຖາບັນ<br>- ສະພາບໍລິຫານ<br>- ສະພາວິຊາການ<br>- ສຳນັກງານສະຖາບັນ(ຫ້ອງການ, ພະແນກ, ໜ່ວຍງານ)<br>- ພາກວິຊາ<br>- ສູນ<br>- ໜ່ວຍວິຊາ | 1. ທີ່ຕັ້ງ ແລະ ພາລະບົດບາດ<br>2. ຊື່, ກາໝາຍ, ລະດັບ, ຮູບແບບທີ່ບໍ່ຊ້ຳກັບວິທະຍາຄານອື່ນ<br>3. ໂຄງປະກອບກົງຈັກການຈັດຕັ້ງ<br>- ສະພາວິທະຍາຄານ<br>- ສະພາບໍລິຫານ<br>- ສະພາວິຊາການ<br>- ສຳນັກງານວິທະຍາຄານ,ຫ້ອງການ, ພະແນກ, ຄະນະວິຊາ, ພາກວິຊາ, ສູນ ແລະ ໜ່ວຍງານ | 1. ທີ່ຕັ້ງ ແລະ ພາລະບົດບາດ<br>2. ຊື່, ກາໝາຍ, ລະດັບ, ຮູບແບບທີ່ບໍ່ຊ້ຳກັບມະຫາວິທະຍາໄລ/ສະຖາບັນທຽບເທົ່າອື່ນ<br>3. ໂຄງປະກອບກົງຈັກການຈັດຕັ້ງ<br>- ສະພາມະຫາວິທະຍາໄລ<br>- ສະພາບໍລິຫານ<br>- ສະພາວິຊາການ<br>- ສຳນັກງານອະທິການບໍດີ (ຫ້ອງການ, ພະແນກ,ໜ່ວຍງານ)<br>- ຄະນະວິຊາ, ພາກວິຊາ, ໜ່ວຍວິຊາ<br>- ສະຖາບັນ<br>- ສູນ<br>- ໂຮງຮຽນ<br>- ໂຮງໝໍ | ບົດວິພາກການສ້າງຕັ້ງ |
| 2. ໂຄງປະກອບບຸກຄະລາກອນ | ຈຳນວນບຸກຄະລາກອນ ອີງຕາມຂະໜາດຂອງວິທະຍາໄລ<br>1. ບຸກຄະລາກອນບໍລິຫານ<br>- ຜູ້ອຳນວຍການ/ຮອງອຳນວຍການ<br>- ຫົວໜ້າຫ້ອງການ/ຮອງຫົວໜ້າຫ້ອງການ<br>- ຫົວໜ້າພະແນກ/ຮອງຫົວໜ້າພະແນກ<br>- ຫົວໜ້າໜ່ວຍງານ/ຮອງຫົວໜ້າໜ່ວຍງານ<br>- ຄູ-ອາຈານ<br>- ພະນັກງານບໍລິຫານ<br>- ຫົວໜ້າສາຍວິຊາ<br>- ຫົວໜ້າໜ່ວຍວິຊາ<br>- ຜູ້ອຳນວຍການ | ຈຳນວນບຸກຄະລາກອນ ອີງຕາມຂະໜາດຂອງສະຖາບັນ<br>1. ບຸກຄະລາກອນບໍລິຫານ<br>- ຫົວໜ້າສະຖາບັນ/ຮອງຫົວໜ້າສະຖາບັນ<br>- ຫົວໜ້າຫ້ອງການ/ຮອງຫົວໜ້າຫ້ອງການ<br>- ຫົວໜ້າພະແນກ/ຮອງຫົວໜ້າພະແນກ<br>- ຫົວໜ້າໜ່ວຍງານ/ຮອງຫົວໜ້າໜ່ວຍງານ<br>- -ຫົວໜ້າພາກວິຊາ/ຮອງຫົວໜ້າພາກວິຊາ<br>- ພະນັກງານບໍລິຫານ<br>- ຄູ-ອາຈານ<br>- ຫົວໜ້າໜ່ວຍວິຊາ<br>- ຜູ້ອຳນວຍການ | ຈຳນວນບຸກຄະລາກອນ ອີງຕາມຂະໜາດຂອງວິທະຍາຄານ<br>1. ບຸກຄະລາກອນບໍລິຫານ<br>- ຫົວໜ້າວິທະຍາຄານ/ຮອງຫົວໜ້າວິທະຍາຄານ ຫຼື ຜູ້ອຳນວຍການ/ຮອງຜູ້ອຳນວຍການ<br>- ຫົວໜ້າສູນ/ຮອງຫົວໜ້າສູນ<br>- ຫົວໜ້າຫ້ອງການ/ຮອງຫົວໜ້າຫ້ອງການຫຼື ຫົວໜ້າຄະນະວິຊາ<br>- ຫົວໜ້າພະແນກ/ຮອງຫົວໜ້າພະແນກ<br>- ຫົວໜ້າພາກວິຊາ/ຮອງຫົວໜ້າພາກວິຊາ<br>- ຫົວໜ້າໜ່ວຍງານ/ຮອງຫົວໜ້າໜ່ວຍງານ<br>- ຄູ-ອາຈານ<br>- ພະນັກງານບໍລິຫານ | ຈຳນວນບຸກຄະລາກອນ ອີງຕາມຂະໜາດ ຂອງມະຫາວິທະຍາໄລ<br>1. ບຸກຄະລາກອນບໍລິຫານ<br>- ອະທິການບໍດີ/ຮອງອະທິການບໍດີ<br>- ຫົວໜ້າຫ້ອງການ/ຮອງຫົວໜ້າຫ້ອງການ<br>- ຄະນະບໍດີ/ຮອງຄະນະບໍດີ<br>- ຫົວໜ້າພາກ/ຮອງຫົວໜ້າພາກ<br>- ຜູ້ອຳນວຍການສະຖາບັນ/ຮອງຜູ້ອຳນວຍການສະຖາບັນ<br>- ຜູ້ອຳນວຍການສູນ/ຮອງຜູ້ອຳນວຍການສູນ<br>- ຫົວໜ້າພະແນກ/ຮອງຫົວໜ້າພະແນກ | - ໂຄງຮ່າງການຈັດຕັ້ງ<br>- ລາຍຊື່ຜູ້ບໍລິຫານ ແລະພະນັກງານທັງໝົດຂອງ ສະຖາບັນ |

- ເງື່ອນໄຂລວມ ຂອງມາດຕະຖານສະຖາບັນການສຶກສາຊັ້ນສູງ

| | | | | | |
|---|---|---|---|---|---|
| | | | | - ຫົວໜ້າໜ່ວຍງານ/ຮອງຫົວໜ້າໜ່ວຍງານ<br>- ຫົວໜ້າໜ່ວຍວິຊາ/ຮອງຫົວໜ້າໜ່ວຍວິຊາ<br>- ຜູ້ອຳນວຍການ/ຮອງຜູ້ອຳນວຍການໂຮງຮຽນ<br>- ຜູ້ອຳນວຍການ/ຮອງຜູ້ອຳນວຍການໂຮງໝໍ<br>- ຄູ-ອາຈານ<br>- ພະນັກງານບໍລິຫານ | |
| 3. ຫຼັກສູດ | - ເປີດຫຼັກສູດລະດັບອະນຸປະລິນຍາຢ່າງໜ້ອຍ 3 ຫຼັກສູດຂຶ້ນໄປ.<br>- ຮູບແບບການຈັດຕັ້ງການຮຽນ-ການສອນພາກທິດສະດີບໍ່ໃຫ້ເກີນ 60% ແລະ ພາກປະຕິບັດຕົວຈິງບໍ່ໃຫ້ຫຼຸດ 40%<br>- ຫຼັກສູດໜຶ່ງຕ້ອງມີຄູສອນຢ່າງໜ້ອຍ 15 ຄົນ/ຫຼັກສູດ, ຄູຜູ້ໜຶ່ງສາມາດສອນໄດ້ບໍ່ເກີນ 3 ວິຊາ ແລະຕ້ອງມີຄູສອນຖືກວິຊາສະເພາະໃນຫຼັກສູດບໍ່ໃຫ້ຫຼຸດ 3 ຄົນ<br>- ຄູສອນຕ້ອງມີວຸດທິການສຶກສາສູງກວ່າລະດັບຕົນເອງສິດສອນ | - ເປີດຫຼັກສູດລະດັບອານຸປະລິນຍາ, ປະລິນຍາຕີ ຢ່າງໜ້ອຍ 3 ຫຼັກສູດຂຶ້ນໄປ.<br>- ຮູບແບບການຈັດຕັ້ງການຮຽນ-ການສອນພາກທິດສະດີບໍ່ໃຫ້ເກີນ 60% ແລະ ພາກປະຕິບັດຕົວຈິງບໍ່ໃຫ້ຫຼຸດ 40%<br>- ຫຼັກສູດໜຶ່ງຕ້ອງມີຄູສອນຢ່າງໜ້ອຍ 20 ຄົນ/ຫຼັກສູດ, ຄູຜູ້ໜຶ່ງສາມາດສອນໄດ້ບໍ່ເກີນ 3 ວິຊາ ແລະຕ້ອງມີຄູສອນຖືກວິຊາສະເພາະໃນຫຼັກສູດບໍ່ໃຫ້ຫຼຸດ 5 ຄົນ<br>- ຄູສອນ ຕ້ອງມີວຸດທິການສຶກສາສູງກວ່າລະດັບຕົນເອງສິດສອນ | 1. ລະດັບປະລິນຍາຕີ<br>- ເປີດຫຼັກສູດຢ່າງໜ້ອຍ 3 ຫຼັກສູດຂຶ້ນໄປ.<br>- ຮູບແບບການຈັດຕັ້ງການຮຽນ-ການສອນພາກທິດສະດີບໍ່ໃຫ້ເກີນ 60% ແລະ ພາກປະຕິບັດຕົວຈິງບໍ່ໃຫ້ຫຼຸດ 40%<br>- ຫຼັກສູດໜຶ່ງຕ້ອງມີຄູສອນຢ່າງໜ້ອຍ 20 ຄົນ/ຫຼັກສູດ, ຄູຜູ້ໜຶ່ງສາມາດສອນໄດ້ບໍ່ເກີນ 3 ວິຊາ ແລະຕ້ອງມີຄູສອນຖືກວິຊາສະເພາະໃນຫຼັກສູດບໍ່ໃຫ້ຫຼຸດ 5 ຄົນ<br>- ຄູສອນ ຕ້ອງມີວຸດທິການສຶກສາສູງກວ່າລະດັບຕົນເອງສິດສອນ<br>2. ລະດັບປະລິຍາໂທ ແລະ ເອກ<br>- ເປີດຫຼັກສູດຢ່າງໜ້ອຍ 01 ຫຼັກສູດຂຶ້ນໄປ<br>- ຮູບແບບການຈັດຕັ້ງ-ການສອນ ໃຫ້ປະຕິບັດຕາມມາດຕະຖານຫຼັກສູດແຫ່ງຊາດ | ການເປີດຫຼັກສູດແມ່ນເລີ່ມແຕ່ລະດັບອານຸປະລິນຍາ ຮອດປະລິນຍາເອກ<br>- ການຈັດຕັ້ງການຮຽນ-ການສອນລະດັບອານຸປະລິນຍາ ແລະ ປະລິນຍາຕີ ແມ່ນໃຫ້ປະຕິບັດຄືກັນກັບ ວິທະຍາໄລ, ສະຖາບັນ ແລະ ວິທະຍາຄານ<br>- ລະດັບປະລິນຍາໂທ ແລະ ເອກໃຫ້ປະຕິບັດຕາມມາດຕະຖານຫຼັກສູດແຫ່ງຊາດ<br>• ຫຼັກສູດປະລິນຍາໂທຕ້ອງມີຄູສອນຢ່າງໜ້ອຍ 12 ຄົນ/ຫຼັກສູດ (ໃນນັ້ນໃຫ້ມີຄູສອນປະຈຳພາຍໃນສະຖາບັນນັ້ນ ຢ່າງໜ້ອຍ 08 ຄົນ), ຄູຜູ້ໜຶ່ງສາມາດສອນໄດ້ບໍ່ເກີນ 02 ວິຊາ<br>• ຄູສອນ ຕ້ອງມີວຸດທິການສຶກສາສູງກວ່າ ຫຼື ມີຕຳແໜ່ງວິຊາການຂັ້ນຮອງສາດສະດາຈານຂຶ້ນໄປ<br>• ຫຼັກສູດປະລິນຍາເອກ ຕ້ອງມີຄູສອນຢ່າງໜ້ອຍ 10 ຄົນ<br>- ຄູສອນຕ້ອງມີວຸດທິການສຶກສາລະດັບປະລິນຍາເອກ ແລະ | - ເອກະສານຫຼັກສູດ ທັງໝົດ (ສະເໜີ) ເປີດສອນຢູ່ສະຖາບັນ<br>- ລາຍຊື່ຄູສອນປະຈຳ ແລະ ຄູສອນຮັບເຊີນ ແຕ່ລະຫຼັກສູດ<br>- ລາຍຊື່ຄູຮັບຜິດຊອບແຕ່ລະຫຼັກສູດ |

- ເງື່ອນໄຂລວມ ຂອງມາດຕະຖານສະຖາບັນການສຶກສາຊັ້ນສູງ

| | | | | | |
|---|---|---|---|---|---|
| | | | | ຜ່ານການສິດສອນລະດັບປະລິຍາໂທຢ່າງໜ້ອຍ 3 ປີ.<br>- ອາຈານທີ່ປຶກສາ ຕ້ອງມີວຸດທິການສຶກສາລະດັບ ປະລິນຍາເອກ ແລະ ມີຕຳແໜ່ງວິຊາການຂັ້ນຮອງສາດສະດາຈານຂຶ້ນໄປ. | |
| 4. ພື້ນຖານໂຄງລ່າງ | 1. ເນື້ອທີ່<br>- ຕ້ອງມີເນື້ອທີ່ດິນ 4,800 ຕາແມັດຂຶ້ນໄປ<br>2. ອາຄານ<br>- ອາຄານບໍລິຫານ, ອາຄານຮຽນ, ຫໍພັກ,<br>- ໃຫ້ຖືກຕ້ອງຕາມເຕັກນິກການກໍ່ສ້າງ, ຮັບປະກັນຄວາມປອດໄພ ແລະ ສຸຂະອານະໄມ (ອີງຕາມການອະນຸມັດຂອງໜ່ວຍງານທີ່ກ່ຽວຂ້ອງ). | 1. ເນື້ອທີ່<br>- ຕ້ອງມີເນື້ອທີດິນ 3 ເຮັກຕາຂຶ້ນໄປ<br>2. ອາຄານ<br>- ອາຄານບໍລິຫານ, ອາຄານຮຽນ, ຫໍພັກໃຫ້ຖືກຕ້ອງຕາມເຕັກນິກການກໍ່ສ້າງ,ຮັບປະກັນຄວາມປອດໄພ ແລະ ສຸຂະອານະໄມ (ອີງຕາມການອະນຸມັດຂອງໜ່ວຍງານທີ່ກ່ຽວຂ້ອງ). | 1. ເນື້ອທີ່<br>- ຕ້ອງມີເນື້ອທີດິນ 5 ເຮັກຕາຂຶ້ນໄປ<br>2. ອາຄານ<br>- ອາຄານບໍລິຫານ, ອາຄານຮຽນ, ຫໍພັກໃຫ້ຖືກຕ້ອງຕາມເຕັກນິກການກໍ່ສ້າງ,ຮັບປະກັນຄວາມປອດໄພ ແລະ ສຸຂະອານະໄມ (ອີງຕາມການອະນຸມັດຂອງໜ່ວຍງານທີ່ກ່ຽວຂ້ອງ). | 1. ເນື້ອທີ່<br>- ຕ້ອງມີເນື້ອທີດິນ 10 ເຮັກຕາ ຂຶ້ນໄປ<br>2. ອາຄານ<br>- ອາຄານບໍລິຫານ, ອາຄານຮຽນ, ຫໍພັກໃຫ້ຖືກຕ້ອງຕາມເຕັກນິກການກໍ່ສ້າງ , ຮັບປະກັນຄວາມປອດໄພ ແລະ ສຸຂະອານະໄມ (ອີງຕາມການອະນຸມັດຂອງໜ່ວຍງານທີ່ກ່ຽວຂ້ອງ). | - ໃບຕາດິນ, ໜັງສືຢັ້ງຢືນກຳມະສິດທີ່ດິນ<br>- ລາຍລະອຽດອາຄານສະຖານທີ່ຂອງສະຖາບັນ<br>- ແຜນຜັງຂອງສະຖາບັນ |
| 5. ສິ່ງອຳນວຍຄວາມສະດວກ | - ຫ້ອງຮຽນ<br>- ອຸປະກອນການຮຽນ-ການສອນ<br>- ຫ້ອງສະໝຸດ<br>- ຫ້ອງ ຄອມພິວເຕີ<br>- ຫ້ອງທົດລອງ<br>- ສະໜາມກິລາ<br>- ສະໂມສອນ<br>- ຫ້ອງປະຊຸມ<br>- ລະບົບອິນເຕີເນັດ ແລະ ອື່ນໆ<br>- ສະຖານທີ່ຈອດລົດ | - ຫ້ອງຮຽນ<br>- ອຸປະກອນການຮຽນ-ການສອນ<br>- ຫ້ອງສະໝຸດ<br>- ຫ້ອງຄອມພິວເຕີ<br>- ຫ້ອງທົດລອງ<br>- ສູນຄົ້ນຄ້ວາວິທະຍາສາດ<br>- ສະໜາມກິລາ<br>- ສະໂມສອນ<br>- ຫ້ອງປະຊຸມ<br>- ລະບົບອິນເຕີເນັດ ແລະ ອື່ນໆ<br>- ສະຖານທີ່ຈອດລົດ | - ຫ້ອງຮຽນ<br>- ອຸປະກອນການຮຽນ-ການສອນ<br>- ຫ້ອງສະໝຸດ<br>- ຫ້ອງຄອມພິວເຕີ<br>- ຫ້ອງທົດລອງ<br>- ສູນຄົ້ນຄວ້າວິທະຍາສາດ<br>- ສະໜາມປະຕິບັດຕົວຈິງ ແລະ ອື່ນໆ<br>- ສະໜາມກິລາ<br>- ສະໂມສອນ<br>- ຫ້ອງປະຊຸມ<br>- ສູນ IT<br>- ລະບົບອິນເຕີເນັດ<br>- ຫ້ອງຝຶກປະຕິບັດ<br>- ສະຖານທີ່ຈອດລົດ | - ຫ້ອງຮຽນ<br>- ອຸປະກອນການຮຽນ-ການສອນ<br>- ຫໍສະໝຸດ<br>- ຫ້ອງຄອມພິວເຕີ<br>- ຫ້ອງທົດລອງ<br>- ສູນຄົ້ນຄວ້າວິທະຍາສາດ<br>- ຫ້ອງຝຶກປະຕິບັດ ແລະ ອື່ນໆ<br>- ສະໂມສອນ<br>- ຫ້ອງປະຊຸມ<br>- ສູນ IT<br>- ລະບົບອິນເຕີເນັດ<br>- ຫ້ອງຖ່າຍທຳ (ສະຕູດີໂອ)<br>- ຫ້ອງການຄົ້ນຄ້ວາວິທະຍາສາດ<br>- ສະຖານທີ່ຈອດລົດ | - ລາຍລະອຽດອາຄານສະຖານທີ່ຂອງສະຖາບັນ<br>- ແຜນຜັງຂອງສະຖາບັນ<br>- ຮູບຖ່າຍ |

- ເງື່ອນໄຂລວມ ຂອງມາດຕະຖານສະຖາບັນການສຶກສາຊັ້ນສູງ

| | | | | | |
|---|---|---|---|---|---|
| 6. ການເງິນ | - ມີແຫຼ່ງທຶນທີ່ໝັ້ນຄົງເພື່ອບໍລິຫານ<br>- ມີແຫຼ່ງທຶນເພື່ອພັດທະນາ ແລະ ການກໍ່ສ້າງວິທະຍາໄລ<br>- ປະຕິບັດລະບຽບການຂອງກະຊວງການເງິນ , ແຜນການ ແລະ ການລົງທຶນ. | - ມີແຫຼ່ງທຶນທີ່ໝັ້ນຄົງເພື່ອບໍລິຫານ<br>- ມີແຫຼ່ງທຶນເພື່ອພັດທະນາ ແລະ ການກໍ່ສ້າງສະຖາບັນ<br>- ປະຕິບັດລະບຽບການຂອງກະຊວງການເງິນ, ແຜນການ ແລະ ການລົງທຶນ. | - ມີແຫຼ່ງທຶນທີ່ໝັ້ນຄົງເພື່ອບໍລິຫານ<br>- ມີແຫຼ່ງທຶນເພື່ອພັດທະນາ ແລະ ການກໍ່ສ້າງວິທະຍາຄານ<br>- ປະຕິບັດລະບຽບການຂອງກະຊວງການເງິນ, ແຜນການ ແລະ ການລົງທຶນ. | - ມີແຫຼ່ງທຶນທີ່ໝັ້ນຄົງເພື່ອບໍລິຫານ<br>- ມີແຫຼ່ງທຶນເພື່ອພັດທະນາ ແລະ ການກໍ່ສ້າງມະຫາວິທະຍາໄລ<br>- ປະຕິບັດລະບຽບການຂອງກະຊວງການເງິນ, ແຜນການ ແລະ ການລົງທຶນ. | - ໜັງສືຢັ້ງຢືນທາງການເງິນ<br>- ລະບຽບການຄຸ້ມຄອງການເງິນຂອງສະຖາບັນ<br>- ແຜນງົບປະມານຂອງສະຖາບັນ |